ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເລກທີ 196 /ທຫ
ນະຄອນຫຼວງວຽງຈັນ, ວັນທີ 30 ກໍລະກົດ 2026

ໜັງສືແຈ້ງເຊີນເຂົ້າຮ່ວມປະມູນ

ເຖິງ: ບັນດາວິສາຫະກິດ ແລະ ບໍລິສັດ ທັງພາຍໃນ ແລະ ຕ່າງປະເທດ.
ເລື່ອງ: ເຂົ້າຮ່ວມການປະມູນ ວຽກງານປັບປຸງສູນຂໍ້ມູນ (Data Center) ຂອງ ທຫລ.

- ອີງຕາມ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບ ເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການ ສະບັບເລກທີ 444/ທຫລ, ລົງວັນທີ 14 ມິຖຸນາ 2022.

ຫ້ອງການ ທະນາຄານແຫ່ງ ສປປ ລາວ (ທຫລ) ຂໍຖືເປັນກຽດແຈ້ງເຊີນ ບໍລິສັດ ທີ່ປຶກສາ ເພື່ອເຂົ້າຮ່ວມປະມູນ ແບບເປີດກວ້າງ **ໂຄງການປັບປຸງສູນຂໍ້ມູນ (Data Center) ຂອງ ທຫລ** ຊຶ່ງຕ້ອງມີມາດຕະຖານ-ເງື່ອນໄຂເບື້ອງຕົ້ນ ຕາມ ທຫລ ກຳນົດ, ຊຶ່ງແບ່ງເປັນ 02 ໄລຍະດັ່ງນີ້:

I. ໄລຍະທີ 1 ຂັ້ນຕອນຂາຍຊອງປະມູນ: ຜູ້ທີ່ຈະສາມາດຊື້ຊອງປະມູນໄດ້ ຕ້ອງມີເງື່ອນໄຂຄົບຖ້ວນ ຄື:

1. ມີໃບທະບຽນວິສາຫະກິດ ແລະ ໃບອະນຸຍາດດຳເນີນທຸລະກິດ ທີ່ຂະແໜງການກ່ຽວຂ້ອງ ອອກອະນຸຍາດ ແລະ ນຳໃຊ້ໄດ້ໃນປັດຈຸບັນ;

2. ມີໃບຢັ້ງຢືນການມອບພັນທະອາກອນ ປະຈຳປີ 2025;

3. ມີໃບລາຍງານຖານະການເງິນ ໂດຍຜ່ານການກວດສອບຈາກພາຍນອກ ປະຈຳປີ 2025;

4. ມີໃບລາຍງານການເຄື່ອນໄຫວບັນຊີຈາກສະຖາບັນການເງິນ (Bank Statement) ນັບແຕ່ຕົ້ນປີ 2026 ເປັນຕົ້ນມາ;

5. ມີຜົນງານ ຫຼື ປະສົບການໃນວຽກງານ ສູນຂໍ້ມູນ (Data Center) ໃນໄລຍະທີ່ຜ່ານມາ (ມີຫຼັກຖານຢັ້ງຢືນ).

ໝາຍເຫດ: ວິສາຫະກິດ ແລະ ບໍລິສັດ ທີ່ຈະເຂົ້າຮ່ວມຊື້ຊອງປະມູນ ຕ້ອງປະກອບ ແລະ ນຳເອົາເອກະສານຕາມ 5 ລາຍການຂ້າງເທິງຢ່າງຄົບຖ້ວນ ແລະ ມີການຢັ້ງຢືນຈາກຜູ້ອຳນວຍການບໍລິສັດກ່ຽວຂ້ອງມາພ້ອມ, ຈາກນັ້ນ ທຫລ ຈຶ່ງຈະຂາຍຊອງປະມູນໃຫ້ໄດ້. ສຳລັບມູນຄ່າຊື້ຊອງປະມູນແມ່ນ **ລາຄາ 3,000,000 ກີບ/ຊອງ;** ມູນຄ່າດັ່ງກ່າວ ຈະບໍ່ຖືກ ສົ່ງເງິນຄືນ ບໍ່ວ່າກໍລະນີໃດກໍຕາມ.

II. ໄລຍະທີ 2 ຂັ້ນຕອນການປະມູນ: ຜູ້ທີ່ໄດ້ຊື້ຊອງປະມູນແລ້ວ ຕ້ອງປະຕິບັດຕາມຂັ້ນຕອນການປະມູນຄື:

1. ຕ້ອງປະກອບເອກະສານປະມູນໃຫ້ຄົບຖ້ວນ ຕາມທີ່ລະບຸໄວ້ໃນເອກະສານ RFP;

2. ຄະນະຮັບຜິດຊອບຈະນັດໝາຍຜູ້ເຂົ້າຮ່ວມການປະມູນ ເພື່ອແນະນຳ ແລະ ອະທິບາຍລາຍລະອຽດການປະກອບເອກະສານ ແລະ ດຳເນີນການປະມູນ;

3. ເມື່ອຮອດກຳນົດມື້ເປີດຊອງປະມູນ ຜູ້ເຂົ້າຮ່ວມການປະມູນ ຕ້ອງຖືຊອງປະມູນ (ຊອງລາຄາ ແລະ ຊອງນິດສະເໜີໂຄງການ ພ້ອມດ້ວຍເອກະສານກ່ຽວຂ້ອງຕາມເງື່ອນໄຂທີ່ກຳນົດໄວ້) ຂອງຕົນມາພ້ອມ ໃນມື້ເປີດຊອງຕົວຈິງ ໂດຍຈະເປີດຊອງປະມູນ (ລາຄາ) ຂອງແຕ່ລະພາກສ່ວນພ້ອມກັນ ແບບຊ່ອງໜ້າກັບຄະນະຮັບຜິດຊອບກ່ຽວຂ້ອງ;

4. ຖ້າວິສາຫະກິດ ຫຼື ບໍລິສັດໃດ ໄດ້ຮັບການຄັດເລືອກເປັນຜູ້ຊະນະການປະມູນ ແມ່ນຈະໄດ້ເຊັນສັນຍາຮ່ວມວຽກກັນ ຕາມການພິຈາລະນາຂອງ ທຫລ.

ບັນດາວິສາຫະກິດ, ບໍລິສັດ ທີ່ມີຄວາມສົນໃຈເຂົ້າຮ່ວມການປະມູນ ສາມາດພ້ອມກັນຊື້ຊອງປະມູນ ແຕ່ວັນທີ 31 ກໍລະກົດ 2026 ເຖິງ ວັນທີ 28 ສິງຫາ 2026 ຢູ່ພະແນກບໍລິຫານ, ຫ້ອງການ ທຫລ, ຕັ້ງຢູ່ບ້ານ ຊຽງຍືນ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ໝາຍເລກໂທລະສັບ 021 241268.

ດັ່ງນັ້ນ, ຈຶ່ງແຈ້ງເຊີນມາຍັງບັນດາວິສາຫະກິດ ແລະ ບໍລິສັດຕ່າງໆ ເພື່ອຊາບ ແລະ ເຂົ້າຮ່ວມການປະມູນໃນຄັ້ງນີ້ດ້ວຍ.

ຫົວໜ້າຫ້ອງການ

ພານຸສັກ ແກ່ນວົງພະຈັນ

LAO PEOPLE'S DEMOCRATIC REPUBLIC
PEACE INDEPENDENCE DEMOCRACY UNITY PROSPERITY

BANK OF THE LAO PDR
Cabinet Office

NO. 196./Office
Vientiane Capital, Date: 30 JUL 2026

Invitation for Bids (IFB)

The Bank of the Lao PDR (BOL)'s Cabinet Office invites bidders who are interested in taking part in the bidding on **the BOL Data Center Upgrade project**. The objective of the project is to retain a qualified consulting firm to provide comprehensive advisory services to the BOL for the construction of a new Primary Data Center site and the upgrade of its existing Disaster Recovery site. Currently, the BOL is seeking bids from domestic and international bidders to participate in this project. Bidders must comply with the following criteria and requirements:

I. Bidder Eligibility and Qualifications

1. Submit valid copies of the Tax Registration Certificate and Business License, issued by the relevant authorities and currently in effect.
2. Submit a Tax Compliance Certificate for the fiscal year 2025.
3. Submit audited financial statements for the fiscal year 2025 issued by an independent external auditor.
4. Submit bank statements issued by a financial institution covering the period from the beginning of 2026 to the present.
5. Demonstrate relevant experience and/or a proven track record in Data Center projects, supported by verifiable evidence.

Note: Companies and enterprises intending to purchase the bidding documents must submit all five (5) required documents listed above, duly certified by the authorized representative of the company. Only those meeting all requirements shall be eligible to purchase the bidding documents. The bidding document fee is LAK 3,000,000 (Three Million Kip) per set and is non-refundable regardless of the bidding result.

II. Acquisition and Submission of Bidding

1. Prepare and submit all required bidding documents in accordance with the requirements specified in the Request for Proposal (RFP).
2. Attend the briefing session organized by the Evaluation Committee, during which detailed guidance on bid preparation and bidding procedures will be provided.
3. On the bid submission and opening date, bidders shall submit: Financial Proposal, Technical Proposal, and all supporting documents required under the specified conditions. The bid packages must be submitted in person at the bid opening session. The Financial Proposals of all bidders will be opened simultaneously and publicly in the presence of the Evaluation Committee.
4. The successful bidder shall enter into a contract with BOL subject to the final approval and consideration of the BOL.

Interested enterprises and companies may obtain the bidding documents from:

Administration Department
Cabinet Office, Bank of the Lao PDR
Xieng Yeun Village, Chanthabouly District, Vientiane Capital

Period: From ..31..**July to** ..28..**August 2026** during official working hours.

For further information, please contact: **Tel:** (+856) 21 241268

The Bank of the Lao PDR cordially invites all qualified and interested enterprises and companies to participate in this bidding process.

Director General of Cabinet Office

Phanousack KENEVONGPHACHANH